ໂຄງການເກັບເງິນລ້ຽງເດັກ
ຂອງຣັດວໍຊິງຕັນ



# ຄະນະກັມມະການ ກອງປະຊຸມຂອງ ຜະແນກເກັບເງິນ ລ້ຽງເດັກ

Washington State
Department of Social & Health Services

*Transforming lives*

DSHS 22-386 LA (Rev. 9/16)

## ຄະນະກັມມະການກອງປະຊຸມແມ່ນຫຍັງ?

ຄະນະກັມມະການກອງປະຊຸມແມ່ນທີມທາງນຶ່ງເພື່ອຈະແກ້ໄຂຄວາມຂັດແຍ້ງກ່ຽວກັບວ່າພະແນກ Division of Child Support (DCS) ປະຕິບັດງານນຳສຳນວນເອກສານຂອງທ່ານແນວໃດ ປະທານຄະນະກັມມະການກອງປະຊຸມແມ່ນທະນາຍຄວາມຂອງ DCS ຜູ້ທີ່ທຳການຕັດສິນ.ການຜ່ອນຄາຍແນວໃດແດ່ທີ່ຄະນະກັມມະການກອງປະຊຸມມີສິດອຳນາດທີ່ຈະອະນຸມັດໃຫ້ໄດ້?

ຄະນະກັມມະການກອງປະຊຸມອາດຈະ:

- ປົດປ່ອຍການຜູກມັດໃຫ້ຈ່າຍຫນີ້ທີ່ຖືກຍຶ່ນໂດຍພະແນກ DCS.
- ປົດປ່ອຍເງິນທີ່ພະແນກ DCS ໄດ້ມາຈາກເງິນພາສີສົ່ງຄືນຂອງ IRS, ບັນຊີທະນາຄານ, ຫລື ແຫລ່ງທີ່ມາບ່ອນອື່ນ.
- ປ່ຽນແປງການກັກເອົາເງິນໄວ້ຈາກເງິນເບີກຂອງທ່ານ.
- ຕັດສິນວ່າພະແນກ DCS ຈະລາຍງານຫນີ້ເງິນລ້ຽງລູກໄປຫາຫ້ອງການເຄຣດິດບິວໂຣຫລືບໍ່.
- ຕັດສິນວ່າພະແນກ DCS ຈະບັງຄັບໃຊ້ຄຳສັ່ງຈ່າຍເງິນ ຫລື ເກັບເອົາຫນີ້ສິນ ຫລື ບໍ່.
- ລຸດຜ່ອນເງິນລ້ຽງລູກຜ່ານມາທີ່ຍັງຕິດຫນີ້ຣັດວໍຊິງຕັນຢູ່.
- ກວດເບິ່ງຄືນ ແລະ ດັດແປງການກະທຳແນວອື່ນທີ່ຖືກເຣັດລົງໄປໂດຍພະແນກ DCS.

ຄະນະກັມມະການກອງປະຊຸມສາມາດຍົກເລີກໃຫ້ໄດ້ ເທົ່ານັ້ນ ສຳລັບ ຫນີ້ທີ່ຍັງຕິດຣັດວໍຊິງຕັນຢູ່, ໂດຍອີງຕາມ:

- ຄວາມຍາກລຳບາກໃຫ້ແກ່ພໍ່ແມ່ຜູ້ທີ່ຈ່າຍເງິນ ຫລື ຄອບຄົວຂອງພໍ່ແມ່ ຄົນນັ້ນ.
- ການຕົກລົງກັນດ້ວຍການຈ່າຍເງິນສ່ວນນຶ່ງ.
- ຄ່າໃຊ້ຈ່າຍຂອງການເກັບເອົາເງິນໃນອະນາຄົດ.
- ຄວາມຜິດພາດ ຫລື ບັນຫາທາງດ້ານກົດຫມາຍທີ່ລຸດຜ່ອນຄວາມເປັນໄປໄດ້ໃນການເກັບເອົາເງິນ.

## ມີບັນຫາແນວໃດບໍ່ທີ່ຄະນະກັມມະການກອງປະຊຸມບໍ່ສາມາດແກ້ໄຂໄດ້?

ມີ. ຄະນະກັມມະການກອງປະຊຸມບໍ່ສາມາດ:

- ປ່ຽນແປງຈຳນວນເງິນລ້ຽງລູກທີ່ຖືກສັ່ງອອກມາໃນຄຳສັ່ງຈາກອຳນາດການປົກຄອງ ຫລື ຄຳສັ່ງຈາກສານ.
- ລຸດຜ່ອນຫນີ້ສິນທີ່ຍັງຕິດບຸກຄົນໃດບຸກຄົນນຶ່ງຢູ່, ຣັດອື່ນ, ຫລື ຫ້ອງການອື່ນໆ.
- ຕັດສິນບັນຫາເຣື່ອງການຢ້ຽມຢາມ ຫລື ຄວາມຄຸ້ມຄອງ.

*ທ່ານຕ້ອງພະຍາຍາມທີ່ຈະຕົກລົງແກ້ໄຂກໍຣະນີຂອງທ່ານ*
*ນຳຫ້ອງການທ້ອງຖິ່ນກ່ອນ.*

## ຂ້າພະເຈົ້າສາມາດຕົກລົງແກ້ໄຂກໍຣະນີຂອງຂ້າພະເຈົ້າໂດຍປາສຈາກຄະນະກັມມະການກອງປະຊຸມໄດ້ບໍ່?

ໄດ້, ພະນັກງານຂອງຫ້ອງການ DCS ທ້ອງຖິ່ນອາດຈະທຳການຕັດສິນແນວດຽວກັນບາງຢ່າງທີ່ຄະນະກັມມະການກອງປະຊຸມຈະເຮັດລົງໄປ.ຕິດຕໍ່ຫາພະນັກງານບັງຄັບເກັບເງິນລ້ຽງເດັກ (SEO) ທີ່ຖືກແຕ່ງຕັ້ງໃສ່ກໍຣະນີຂອງທ່ານເພື່ອຈະພະຍາຍາມທີ່ຈະບັນລຸການຕົກລົງກັນໄດ້ກ່ອນຄະນະກັມມະການກອງປະຊຸມ. ທ່ານຍັງຈະເວົ້າລົມນຳຜູ້ນຳພະນັກງານຫລື ຜູ້ຄວບຄຸມງານໄດ້ອີກດືກັນ. ຖ້າຫາກວ່າທ່ານບໍ່ສາມາດບັນລຸການຕົກລົງກັນໄດ້, ທ່ານຍັງສາມາດມີການປະຊຸມນຳຄະນະກັມມະການກອງປະຊຸມໄດ້.

## ຂ້າພະເຈົ້າຈະຮ້ອງຂໍເອົາຄະນະກັມມະການກອງປະຊຸມໄດ້ແນວໃດ?

- ຕິດຕໍ່ຫາຫ້ອງການ DCS ທ້ອງຖິ່ນໂດຍທາງໂທຣະສັບ, ໄປສະນີ ຫລື ໂດຍບຸກຄົນ. ຫ້ອງການທ້ອງຖິ່ນຈະສົ່ງສຳນວນເອກສານຂອງທ່ານຕໍ່ໄປຫາໜ່ວຍຄະນະກັມມະການກອງປະຊຸມ.
- ອະທິບາຍສິ່ງທີ່ທ່ານບໍ່ເຫັນພ້ອມນຳ ແລະ ເປັນຫຍັງ.
- ເອົາຣາຍຣະອຽດໃຫ້ເພື່ອຈະອູ້ມຊູການກ່າວຫາວຂອງທ່ານ.

## ປະທານຂອງຄະນະກັມມະການກອງປະຊຸມຈະຕັດສິນແນວໃດ?

ປະທານກອງປະຊຸມອີງຄຳຕັດສິນຂອງເຂົາເຈົ້າໃສ່:

- ບັນທຶກຂອງພະແນກ DCS, ກົດຣະບຽບ ແລະ ກົດໝາຍ, ແລະ
- ຣາຍຣະອຽດທີ່ທ່ານ ຫລື ຝ່າຍກົງກັນຂ້າມເອົາໃຫ້.

## ມີການປະຊຸມກັນບໍ່?

ຕາມທັມມະດາ ແລ້ວປະທານຂອງຄະນະກັມມະການກອງປະຊຸມທຳການຕັດສິນໂດຍບໍ່ມີການປະຊຸມນຳທ່ານ. ເຂົາເຈົ້າອາດຈະຮ້ອງຂໍເອົາຣາຍຣະອຽດເພີ້ມເຕີມອີກໂດຍທາງໜັງສື ຫລື ທາງໂທຣະສັບ. ບໍ່ວ່າຈະເປັນທາງໃດ, ທ່ານຈະໄດ້ຮັບຄຳຕັດສິນທາງໜັງສື.

## ແມ່ນຫຍັງເກີດຂຶ້ນຢູ່ໃນກອງປະຊຸມຂອງຄະນະກັມມະການກອງປະຊຸມ?

ປະທານຂອງກອງປະຊຸມ ແລະ ພະນັກງານຂອງພະແນກ DCS ຄົນນຶ່ງ ຫລື ຫລາຍຄົນມີສ່ວນເຂົ້າຮ່ວມໃນກອງປະຊຸມທີ່ບໍ່ເປັນທາງການຕາມປົກກະຕິແລ້ວໂດຍທາງໂທຣະສັບ.

ສະມາຊິກຂອງຄະນະກັມມະການກອງປະຊຸມຈະຟັງ ແລະ ຖາມຄຳຖາມໃນຂະນະທີ່ທ່ານບອກທັສນະຄວາມເຫັນຂອງທ່ານກ່ຽວກັບຄວາມຂັດແຍ້ງ. ອີກຝ່າຍນຶ່ງຍັງຈະແລກປ່ຽນແນວຄິດເຫັນຂອງເຂົາເຈົ້າອີກດືກັນ, ຢູ່ໃນບາງກໍຣະນີ. ຕາມປົກກະຕິແລ້ວການປະຊຸມຈະຍາວນານຕ່ຳກວ່າຊົ່ວໂມງນຶ່ງ.

## ຂ້າພະເຈົ້າຈະເຂົ້າຮ່ວມນຳໃນກອງປະຊຸມນຳຄະນະກັມມະການກອງປະຊຸມໄດ້ແນວໃດ?

ທ່ານ, ປະທານກອງປະຊຸມ, ພະນັກງານຂອງພະແນກ DCS, ຫລື ບຸກຄົນອື່ນທີ່ກ່ຽວພັນນຳການປະຊຸມຈະມີເຂົ້າຮ່ວມນຳທາງໂທຣະສັບ.

ເພື່ອວ່າຈະມີສ່ວນເຂົ້າຮ່ວມນຳທາງໂທຣະສັບ, ທ່ານຕ້ອງ:

- ໂທຫາພະແນກ DCS ຕາມເລກໂທທີ່ຖືກຕີພິມຢູ່ໃນໃບແຈ້ງການອາທິດນຶ່ງກ່ອນການປະຊຸມເພື່ອຈະຮັບປະກັນວ່າພະແນກ DCS ມີເລກໂທຣະສັບທີ່ຖືກຕ້ອງຂອງທ່ານ,ແລະ
- ຢູ່ໃກ້ເລກໂທຣະສັບເລກນັ້ນໃນວັນທີ ແລະ ເວລາຂອງການປະຊຸມກັນ.

ຖ້າຫາກວ່າບໍ່ມີໂທຣະສັບທີ່ທ່ານສາມາດໃຊ້ໄດ້, ຕິດຕໍ່ຫາພວກເຮົາໂດຍໄວເທົ່າທີ່ຈະເປັນໄປໄດ້ ແລະ ທຳການຈັດຫາແນວອື່ນ.

## ຂ້າພະເຈົ້າຈະສາມາດຮ້ອງຂໍເອົາວັນທີ ຫລື ເວລາຕ່າງໄດ້ແນວໃດສຳລັບການປະຊຸມນຳຄະນະກັມມະການກອງປະຊຸມຂອງຂ້າພະເຈົ້າ?

ຖ້າຫາກວ່າທ່ານບໍ່ສາມາດມາປະຊຸມຕາມທີ່ຖືກຫມາຍນັດໄວ້, ໂທມາ ແລະ ຂໍເອົາການເຮັດຫມາຍນັດໃຫມ່.ໂທຫາພະແນກ DCS ຢ່າງຫນ້ອຍນຶ່ງອາທິດກ່ອນວັນນັດປະຊຸມກັນ. ໃບແຈ້ງການຂອງຄະນະກັມມະການກອງປະຊຸມເອົາເລກໂທຣະສັບໃຫ້ທ່ານເພື່ອຈະໂທມາ.

## ຂ້າພະເຈົ້າຕ້ອງໄດ້ສິ່ງແນວໃດແນວນຶ່ງມາໃຫ້ຄະນະກັມມະການກອງປະຊຸມບໍ່?

ຖ້າຫາກວ່າທ່ານມີເອກສານທີ່ທ່ານຕ້ອງການຢາກໃຫ້ປະທານທີ່ຈະກວດເບິ່ງຄືນ, ສົ່ງເອກສານມາຫາພະແນກ DCS ກ່ອນການປະຊຸມຂອງທ່ານ,ຖ້າເປັນໄປໄດ້. ພາກສ່ວນອື່ນໆທຸກໆຝ່າຍອາດຈະເຫັນຫລັກທານຂອງທ່ານ, ເພາະສະນັ້ນແລ້ວທ່ານຄວນຈະລຶບເອົາລາຍຣະອຽດສ່ວນຕົວອອກ.ປະທານຈະມີເອກສານທຸກໆຢ່າງທີ່ທ່ານເອົາໃຫ້ພະແນກ DCS.

## ຂ້າພະເຈົ້າສາມາດກະຕຽມສຳລັບກະມະກັມມະການກອງປະຊຸມໄດ້ຢ່າງໃດ?

- ຈົດບັນທຶກໄວ້ເພື່ອຈະຈັດຕຽມສິ່ງທີ່ທ່ານຢາກຈະເວົ້າ.
- ເອົາເອກສານຕ່າງໆໃຫ້ຊຶ່ງຈະຊ່ວຍປະທານກອງປະຊຸມໃຫ້ເຂົ້າໃຈ ແລະ ແກ້ໄຂຄວາມຂັດແຍ້ງ.

## ໃນຣະຫວ່າງການປະຊຸມນຳຄະນະກັມມະການກອງປະຊຸມ, ທ່ານຈະ:

- ຖືກເປັນຕົວແທນໂດຍຄົນໃດຄົນນຶ່ງ, ເຊັ່ນວ່າທະນາຍຄວາມ, ຫມູ່ເພື່ອນ ຫລື ພີ່ນ້ອງ. ເຖິງຢ່າງໃດກໍຕາມ, ທ່ານບໍ່ມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫລືອທາງດ້ານກົດຫມາຍຟຣີຈາກພະແນກ DCS.
- ເວົ້າເຖິງທັສນະຄວາມເຫັນຂອງທ່ານກ່ຽວກັບສຳນວນເອກສານ.
- ສະເນີຫລັກຖານ; ເຊັ່ນວ່າເຊັກເງິນທີ່ຖືກຍົກເລີກແລ້ວ, ບັນທຶກຂອງໂຮງຮຽນ, ຄຳແຈ້ງການຂອງພະຍານ ຫລື ເອກສານອື່ນໆ.
- ຂໍຮ້ອງໃຫ້ສິ່ງຫລັກຖານເພີ້ມເຕີມເຂົ້າມາອີກຫລັງຈາກກອງປະຊຸມ.
- ໃຫ້ປະທານກອງປະຊຸມໂທຣະສັບຫາພະຍານຂອງທ່ານ.

ສະມາຊິກຂອງຄະນະກັມມະການອາດຈະຖາມຄຳຖາມທ່ານ ແລະ ພະຍານຂອງທ່ານ.

ກະຣຸນາສະແດງຄວາມນັບຖືຕໍ່ຄົນອື່ນທີ່ມາຮ່ວມນຳ.

## ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ມີເວລາວ່າງສຳລັບການປະຊຸມ?

ຖ້າຫາກວ່າປະທານກອງປະຊຸມບໍ່ສາມາດຕິດຕໍ່ຫາທ່ານໄດ້ໂດຍທາງໂທຣະສັບສຳລັບການປະຊຸມ, ປະທານອາດຈະ:

- ເລີກລົ້ມຄຳຮ້ອງຂໍຂອງທ່ານ.
- ດຳເນີນກອງປະຊຸມຕໍ່ໄປໂດຍບໍ່ມີທ່ານຮ່ວມນຳ.

## ຂ້າພະເຈົ້າຈະຮູ້ຈັກໄດ້ແນວໃດວ່າການປະຊຸມຂອງຂ້າພະເຈົ້າໄດ້ຖືກຈັດຂຶ້ນ?

ພະແນກ DCS ສົ່ງໃບແຈ້ງການໄປໃຫ້ທ່ານພ້ອມດ້ວຍວັນທີ ແລະ ເວລາຂອງການປະຊຸມ. ໃຫ້ແນ່ໃຈວ່າພະແນກ DCS ຮູ້ຈັກທີ່ຢູ່ໄປສະນີ ແລະເລກໂທຣະສັບປັດຈຸບັນຂອງທ່ານ.

## ຖ້າຫາກວ່າຂ້າພະເຈົ້າບໍ່ມັກຄຳຕັດສິນຂອງຄະນະກັມມະການກອງປະຊຸມເດ?

ຮ້ອງຂໍເອົາການກວດເບິ່ງຄືນທີ່ບໍ່ເປັນທາງການເປັນລາຍລັກອັກສອນໄປຫາຜູ້ຈັດການຂອງຄະນະກັມມະການກອງປະຊຸມໄດ້ທີ່:

PO Box 9162, Olympia, WA 98507

## ຖ້າຫາກວ່າຂ້າພະເຈົ້າເວົ້າພາສາອັງກິດບໍ່ໄດ້ດີ ຫລື ມີຄວາມຕ້ອງການພິເສດເດ?

ໂທຫາ 360-664-5326 ຫລື 800-457-6202 ຖ້າຫາກວ່າທ່ານ ຫລື ພະຍານຕ້ອງການ:

- ນາຍແປເອກສານ ຫລື ນາຍແປພາສາ. ຫມູ່ເພື່ອນ ຫລື ພີ່ນ້ອງຈະບໍ່ເປັນນາຍແປພາສາຂອງທ່ານໄດ້ນອກຈາກວ່າຖືກອະນຸຍາດລ່ວງຫນ້າ.
- ຄວາມຊ່ວຍເຫລືອພິເສດແນວອື່ນເຊັ່ນວ່ານາຍແປພາສາໃບ້ ຫລື ເອກສານໃນແບບຮູບຮ່າງແນວອື່ນຍ້ອນຄວາມເສັຽອົງຄະ.

ໂທຫາ 360-664-5011 ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນຳຫູຫນວກ ແລະ ຍາກລຳບາກນຳການຟັງສຽງ (TDD) ນຳພະແນກ DCS.ຮ້ອງຂໍເອົາການບໍຣິການຟຣີເຫລົ່ານີ້ໄດ້ຢ່າງຫນ້ອຍອາທິດນຶ່ງກ່ອນການປະຊຸມກັນ. ຫ້ອງການ DCS ທຸກໆບ່ອນແມ່ນລໍເຂັນນັ່ງເຂົ້າເຖິງໄດ້.

## ຖ້າຫາກວ່າທ່ານມີຄຳຖາມອື່ນໆກ່ຽວກັບຄະນະກັມມະການກອງປະຊຸມ, ທ່ານຈະ:

- ໂທຫາຫ້ອງການ DCS ທ້ອງຖິ່ນ ຫລື ຫນ່ວຍຄະນະກັມມະການກອງປະຊຸມຕາມເລກໂທຣະສັບຢູ່ທາງດ້ານຫລັງຂອງປຶ້ມຄູ່ມືຫົວນີ້.
- ຕິດຕໍ່ຫາທະນາຍຄວາມ.

ໂທຫາຫ້ອງການ **DCS** ໃກ້ບ້ານທ່ານທີ່ສຸດ ຫລື ໂທຫາ **800-442-KIDS (5437)** ເພື່ອຈະ ຊອກຫາຫ້ອງການທີ່ກຳສຳນວນເອກສານຂອງທ່ານ.

**ຫ້ອງການ DCS:**

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສຳນັກງານໃຫຍ່ | 800-457-6202<br>360-664-5000 |
| ໜ່ວຍຄະນະກັມມະການກອງປະຊຸມ | 800-457-6202<br>360-664-5326 |
| ເລກແຟກຊ໌ | 360-664-5340 |

ກົດລະບຽບປົກຄອງຄະນະກັມມະການກອງປະຊຸມແມ່ນຢູ່ໃນກົດໝາຍ ປົກຄອງຣັດວໍຊິງຕັນ: WAC 388-14A-6400 ໄປເຖິງ 6415

Washington State Department of Social & Health Services

*Transforming lives*

ຈີກຢູ່ທີ່ນີ້, ພັບ ແລະ ຕິດເທັບໃສ່ໃຫ້ແຈບ.

# ຄຳຮ້ອງຂໍເອົາຄະນະກັມມະການກອງປະຊຸມ

ເພື່ອຈະຮ້ອງຂໍເອົາຄະນະກັມມະການກອງປະຊຸມ, ຂໍຣຸນປະກອບໃບຟອມໃບນີ້ ແລະ ສົ່ງກັບຄືນມາຫາພະແນກເກັບເງິນລ້ຽງເດັກ (DCS).
ຍົກເວັ້ນແຕ່ລາຍເຊັນຂອງທ່ານ, ຂໍຣຸນເປັນຕົວ ຫລື ຕີພິມຄຳຕອບທຸກໆອັນ.ຄັດຫນ້າເຈັ້ຽເພີ້ມເຕີມໃສ່ມານຳຖ້າຫາກວ່າຕ້ອງການ.

ຂ້າພະເຈົ້າໄດ້ພະຍາຍາມທີ່ຈະແກ້ໄຂຕົກລົງຄວາມຂັດແຍ້ງຂອງຂ້າພະເຈົ້ານຳພະນັກງານຂອງ DCS. ຂ້າພະເຈົ້າຮ້ອງຂໍເອົາຄະນະກັມມະການກອງປະຊຸມຍ້ອນວ່າ:

______________________________

______________________________

______________________________

ຂ້າພະເຈົ້າເຂົ້າໃຈວ່າ:

1. ຄະນະກັມມະການກອງປະຊຸມຈະພະຍາຍາມທີ່ຈະແກ້ໄຂຕົກລົງຄຳຮ້ອງທຸກຢ່າງບໍ່ເປັນທາງການ. ຄະນະກັມມະການບໍ່ສາມາດທີ່ຈະດັດແປງຄຳສັ່ງຈາກສານ. ສານບໍ່ກວດເບິ່ງຄືນໃນຄຳຕັດສິນຂອງຄະນະກັມມະການ.
2. ອັນນີ້ບໍ່ແມ່ນຄຳຮ້ອງຂໍເອົາການດຳເນີນການທາງອຳນາດສານ (ການຟ້ອງເຣື່ອງ). ຄະນະກັມມະການກອງປະຊຸມບໍ່ໄດ້ໃຊ້ແທນສິດທິອື່ນໆແນວໃດແນວນຶ່ງທີ່ຂ້າພະເຈົ້າມີຢູ່ຕໍ່ການຟ້ອງເຣື່ອງ. ຄຳຮ້ອງຂໍອັນນີ້ຈະບໍ່ຢຸດຢັ້ງພະແນກ DCS ຈາກການປະຕິບັດງານໃນການເກັບເອົາເງິນ.
3. ຂ້າພະເຈົ້າຈະເປັນຕົວແທນຂ້າພະເຈົ້າເອງໄດ້ ຫລື ໃຫ້ຄົນອື່ນຄົນໃດຄົນນຶ່ງອີກເປັນຕົວແທນຂອງຂ້າພະເຈົ້າ. ພະແນກກົດ ຈະບໍ່ຈ່າຍຄ່າໃຊ້ຈ່າຍຂອງຂ້າພະເຈົ້າ.
4. ພະແນກ DCS ຈະສົ່ງໃບໂກປີຂອງຄຳຮ້ອງຂໍອັນນີ້ໄປຫາຝ່າຍກົງກັນຂ້າມຕໍ່ສຳນວນເອກສານເງິນລ້ຽງລູກຂອງຂ້າພະເຈົ້າ. ພະແນກ DCS ຈະເອົາທີ່ຢູ່ຂອງຂ້າພະເຈົ້າອອກຈາກໂກປີທີ່ຖືກສົ່ງໄປຫາຝ່າຍກົງກັນຂ້າມ.

| | | |
|---|---|---|
| ຂໍຣຸນຊື່ເປັນຕົວ | | |
| ຕູ້ໄປສະນີ ຫລື ທີ່ຢູ່ຖະນົນ | | |
| ເມືອງ | ຣັດ | ຊິບໂຄດ |
| ວັນທີ | ໂທຣະສັບເຮືອນ | ໂທຣະສັບວຽກງານ |
| ລາຍເຊັນ | | |
| ເລກສຳນວນເອກສານ (ຖ້າຮູ້ຈັກ) : | | |

ຈະບໍ່ມີບຸກຄົນໃດ, ຍ້ອນວ່າຜິວພັນ, ສີສັນ, ເຊື້ອຊາດດັ້ງເດີມ, ລັດທິ, ສາສະນາ, ເພດ, ອາຍຸ, ຫລື ຄວາມເສັຽອົງຄະ, ຈະຖືກແບ່ງແຍກອົບຮົມອັນນະໃສ່ໃນວຽກງານ, ການບໍຣິການ, ຫລື ໃນແງ່ໃດແງ່ນຶ່ງຂອງກິຈກັມຂອງໂຄງການ. ໃບຟອມໃບນີ້ຈະມີໄວ້ໃຫ້ໃນແບບຮູບຮ່າງອື່ນຕາມຄຳຮ້ອງຂໍ.

NAME

ADDRESS

CITY/STATE/ZIP

PLACE
STAMP
HERE

DEPARTMENT OF SOCIAL & HEALTH SVCS
DIVISION OF CHILD SUPPORT
PO BOX 11520
TACOMA WA  98411-5520